ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 1993----/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 05 SEP 2019

# ໜັງສືແຈ້ງເຊີນປະມູນ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ມີຄວາມຕ້ອງການ ການບໍລິການປະກັນໄພເຂື່ອນ ສໍາລັບ 03 ເຂື່ອນ: ເຂື່ອນໄຟຟ້ານໍ້າຖານ 2, ເຂື່ອນໄຟຟ້ານໍ້າສະນາ ແລະ ເຂື່ອນໄຟຟ້າຫ້ວຍລໍາພັນໃຫຍ່, ດ້ວຍການດໍາເນີນການປະມູນເປີດກວ້າງພາຍໃນ.

2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຟລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບລົງວັນທີ 19/02/2018.

3. ຜ-ຟຟລ ຂໍເຊີນບັນດາບໍລິສັດປະກັນໄພທີ່ມີເງື່ອນໄຂເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ພົວພັນກັບການບໍລິການປະກັນໄພດັ່ງກ່າວເຂົ້າຮ່ວມ.

4. ບໍລິສັດປະກັນໄພທີ່ມີເງື່ອນໄຂເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສໍານັກງານໃຫຍ່ ຜ-ຟຟລ, ຝ່າຍແຜນການ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ 09/09/2019 - 04/10/2019, ຕອນເຊົ້າ ເວລາ 08:30 - 12:00 ໂມງ ແລະ ຕອນບ່າຍ ເວລາ 13:00 - 17:00 ໂມງ. ສໍານັກງານຕັ້ງຢູ່: ຖະໜົນມິດຕະພາບ ລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງ ວຽງຈັນ, ສປປ. ລາວ, ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141.

5. ບໍລິສັດປະກັນໄພທີ່ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຟລ ຕາມທີ່ຢູ່ທີ່ລະບຸໃນຂໍ້ 4, ເລີ່ມແຕ່ ວັນທີ 09/09/2019 – 04/10/2019, ໃນວັນ ແລະ ເວລາທີ່ລະບຸໃນຂໍ້ 4, ໃນລາຄາ 250.000 (ສອງແສນຫ້າສິບພັນ) ກີບ/ຊຸດ, ວິທີການຊໍາລະຕ້ອງຊໍາລະເປັນເງິນສົດ, ໂດຍຈໍານວນເງິນດັ່ງກ່າວນີ້ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

6. ການລົງເບິ່ງສະຖານທີ່, ເກັບຂໍ້ມູນ ແລະ ສໍາຫຼວດຄວາມສ່ຽງຈະຈັດຂຶ້ນໃນວັນ ແລະ ເວລາ:
   - ເຂື່ອນໄຟຟ້ານໍ້າຖານ 2: ວັນທີ 07/10/2019, ເວລາ 10:30 ໂມງ ເປັນຕົ້ນໄປ.
   - ເຂື່ອນໄຟຟ້ານໍ້າສະນາ: ວັນທີ 09/10/2019, ເວລາ 09:30 ໂມງ ເປັນຕົ້ນໄປ.
   - ເຂື່ອນໄຟຟ້າຫ້ວຍລໍາພັນໃຫຍ່: ວັນທີ 11/10/2019, ເວລາ 09:30 ໂມງ ເປັນຕົ້ນໄປ.

   ໂດຍຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນ ແລະ ການເດີນທາງທັງໝົດແມ່ນຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມປະມູນ.

7. ຊອງປະມູນຕ້ອງສົ່ງໃຫ້ຕາມທີ່ຢູ່ ທີ່ລະບຸໃນຂໍ້ 4, ກ່ອນເວລາ 14:00 ໂມງ, ວັນທີ 04/11/2019. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນຈະໄດ້ເລີ່ມເປີດໃນເວລາ 14:00 ໂມງ, ວັນທີ 04/11/2019 ໂດຍຊ້ອງໜ້າຄະນະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນໍາ.

**ຜູ້ອໍານວຍການໃຫຍ່**

ກະຊວງ ພະລັງງານ ແລະ ບໍ່ແຮ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນຫຼວງ ວຽງຈັນ

ທອງເພັດ ດວງເງິນ

ຮອງຜູ້ອໍານວຍການໃຫຍ່